ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຂ່າວພິທີລົງນາມການຮ່ວມມືລະຫວ່າງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ສາຍໃຍສຳພັນ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT)

ນະຄອນຫຼວງວຽງຈັນ, ວັນທີ: 15/08/2018

ວັນທີ 15 ສິງຫາ 2018, ຢູ່ທີ່ ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບຝາກເງິນ ສາຍໃຍສຳພັນ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT). ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ**, ຮອງຜູ້ອຳນວຍການໃຫຍ່ ທຄຕລ ແລະ **ທ່ານ ສາຍສະໝອນ ກອນເມືອງຈັນ**, ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ສາຍໃຍສຳພັນ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະຜູ້ບໍລິຫານທັງສອງຝ່າຍ, ຄະນະພະແນກ, ຄະນະສູນ ແລະ ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



ການບໍລິການຊຳລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການທຳອິດໃນປີ 2009 ແລະ ເປັນບໍລິການທີ່ໄດ້ມີການຊົມໃຊ້ຫຼາຍ. ມາຮອດປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການຊຳລະຄ່າສາທາລະນຸປະໂພກຮ່ວມກັບ 24 ພາກສ່ວນ ໃນນັ້ນປະກອບມີ: ການຊຳລະຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະສັບ, ພາສີ-ອາກອນ, ຄ່າເຊົ່າສາຍເຄເບິ້ນ, ຄ່ານ້ຳມັນເຊື້ອໄຟ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທ ແຫ່ງທີ 1 ແລະ ຊຳລະຄ່າງວດເຊົ່າສິນເຊື່ອ ໂດຍມີການເຄື່ອນໄຫວທັງໝົດ ຫຼາຍກວ່າ 6 ລ້ານ ລາຍການ, ລວມມູນຄ່າ 1 ພັນກວ່າຕື້ ກີບ. ທຄຕລ ໄດ້ເອົາໃຈໃສ່ໃນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານບໍລິການ ໃຫ້ມີຄວາມທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຊຳລະສະສາງ ແລະ ການເຮັດທຸລະກຳທາງດ້ານການເງິນຕ່າງໆ ໂດຍລູກຄ້າເອງ ບໍ່ຈຳເປັນຕ້ອງເຂົ້າມາທະນາຄານ.

ສັນຍາວ່າດ້ວຍການຮ່ວມມືການຊຳລະຄ່າບໍລິການຜ່ານ ທຄຕລ (Bill Payment) ລະຫວ່າງ ທຄຕລ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາຍໃຍສຳພັນ ໃນຄັ້ງນີ້ ແມ່ນເພື່ອອຳນວຍຄວາມສະດວກຍິ່ງຂຶ້ນ ໃນການຊຳລະຄ່າງວດເຊົ່າສິນເຊື່ອຂອງລູກຄ້າ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາຍໃຍສຳພັນ ຜ່ານ ທຄຕລ. ເຊິ່ງໃນເບື້ອງຕົ້ນແມ່ນ ນຳໃຊ້ລະບົບ Auto Debit ກໍຄືການຕັດບັນຊີອັດຕະໂນມັດຂອງບັນຊີລູກຄ້າ ໂດຍຖືກຕ້ອງຕາມນິຕິກຳທີ່ກ່ຽວຂ້ອງໃນການຊຳລະຄ່າງວດເຊົ່າສິນເຊື່ອໃຫ້ແກ່ທາງສະຖາບັນການເງິນ ຈຸລະພາກ ທີ່ຮັບເງິນຝາກ ສາຍໃຍສຳພັນ. ໃນອະນາຄົດ ຈະມີການພັດທະນາ ໃຫ້ສາມາດຊຳລະຜ່ານເຄົ້າເຕ້ (Counter) ຈຸດ ບໍລິການ ສຳນັກງານໃຫຍ່ ທຄຕລ, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວລະບົບ ທຄຕລ, ຜ່ານມືຖື ດ້ວຍ BCEL One ແລະ BCEL i-Bank, ຕູ້ ATM ແລະ SMS Banking ຕື່ມອີກ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນຳໃຊ້ຜະລິດຕະພັນ ແລະ ບໍລິການ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆເພື່ອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າ ໃນຍຸກແຫ່ງການບໍລິການທະນາ ຄານແບບດີຈີຕໍ.







ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la